ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຈັດຕັ້ງ ແລະ ພະນັກງານ

ເລກທີ 0145 /ກຈພ

ນະຄອນຫຼວງວຽງຈັນ, ວັນທີ 20.01.2023

# ແຈ້ງການ

ເຖິງ : - ຫ້ອງການກະຊວງ, ບັນດາກົມ, ສະຖາບັນ ແລະ ສູນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;
- ບັນດາວິທະຍາໄລກະສິກຳ ແລະ ປ່າໄມ້, ໂຮງຮຽນຊົນລະປະທານຊັ້ນສູງທ່າງ່ອນ ທີ່ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້;
- ບັນດາພະແນກກະສິກຳ ແລະ ປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ.

ເລື່ອງ: ສະໝັກທຶນຝຶກອົບຮົມລະດັບພາກພື້ນ ພາຍໃຕ້ໂຄງການຄວາມປອດໄພທາງດ້ານອາຫານໃນ ໄລຍະ II, ທີ່ ສະຖາບັນ ແມ່ນ້ຳຂອງ, ແຂວງ ຂອນແກ່ນ, ຣາຊະອານາຈັກໄທ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 1617/ກປ, ລົງວັນທີ 29 ທັນວາ 2021;
- ອີງຕາມ ໜັງສື ຈາກສະຖາບັນແມ່ນ້ຳຂອງ ສະບັບເລກທີ MI02/553/2022, ລົງວັນທີ 31 ທັນວາ 2022;
- ອີງຕາມ ໜັງສືຈາກ ຫ້ອງການ, ກະຊວງການຕ່າງປະເທດ ສະບັບເລກທີ 64/ຫກ, ລົງວັນທີ 09 ມັງກອນ 2023;
- ອີງຕາມ ການຄົ້ນຄວ້າ ແລະ ສະເໜີຂອງ ພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ.

ກົມຈັດຕັ້ງ ແລະ ພະນັກງານ ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ ສະຖາບັນແມ່ນ້ຳຂອງໂດຍໄດ້ຮັບການສະໜັບສະໜູນຈາກ ໂຄງການຊ່ວຍເຫຼືອຈາກນິວຊີແລນ ກຳລັງຈັດຕັ້ງປະຕິບັດໂຄງການຄວາມປອດໄພທາງດ້ານອາຫານ ໃນໄລຍະ ຈະໄດ້ຈັດຝຶກອົບຮົມລະດັບພາກພື້ນ ຈຳນວນ 07 ຫົວຂໍ້ ກ່ຽວກັບວຽກງານປິ່ນອ້ອມຄວາມປອດໄພທາງດ້ານອາຫານໃຫ້ແກ່ພາກລັດ ແລະ ພາກທຸລະກິດ ໃນປະເທດ ກຳປູເຈຍ-ລາວ-ມຽນມາ-ຫວຽດນາມ (CLMV) ປະຈຳປີ 2023 ໃນລະຫວ່າງ ເດືອນ ກຸມພາ ຫາ ເດືອນ ມີນາ 2023, ທີ່ ສະຖາບັນແມ່ນ້ຳຂອງ, ແຂວງຂອນແກ່ນ, ຣາຊະອານາຈັກໄທ, ເຊິ່ງມີລາຍລະອຽດລຸ່ມນີ້:

| No | Course Titles | Start Date | End Date | Application Form |
|---|---|---|---|---|
| 01 | Food Safety Market Surveillance in the Food Chain | 06 - Feb -2023 | 10- Feb -2023 | |

| | | | | |
|---|---|---|---|---|
| 02 | Traceability in Food Value Chain | 13 - Feb -2023 | 17- Feb -2023 | |
| 03 | Social and Behavior Change Communication for Safer Food | 20 - Feb - 2023 | 03 - March 2023 | |
| 04 | Good Hygience Practices for Food Service Providers | 06 - March-2023 | 10 - March-2023 | |
| 05 | Food Safety Management Tools for Cottage and Small Food Businesses | 13 - March-2023 | 17 - March-2023 | |
| 06 | Risk-based Food Inspection | 20 - March-2023 | 24 - March-2023 | |
| 07 | Regional Training of Trainers for Safer Food | 20 - March-2023 | 31 - March-2023 | |

ກົມຈັດຕັ້ງ ແລະ ພະນັກງານ, ຕູ້ປນ 811, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ/ແຟັກ: 021 412347, 415368, 452455, E-mail: doapmaf@gmail.com

ເງື່ອນໄຂ ແລະ ວິທີການສະໝັກ:

- ໃຫ້ຄັດເລືອກເອົາພະນັກງານຜູ້ທີ່ມີເງື່ອນໄຂເໝາະສົມເພື່ອເຂົ້າຮ່ວມສະໝັກທຶນດັ່ງກ່າວ ແລ້ວສົ່ງລາຍຊື່ພ້ອມແບບຟອມສະໝັກ, ສຳເນົາໜັງສືຜ່ານແດນ ແລະ ເອກະສານຕ່າງໆ ຕາມເງື່ອນໄຂ ຂອງທຶນຝຶກອົບຮົມ ເຖິງ ກົມຈັດຕັ້ງ ແລະ ພະນັກງານ ກ່ອນວັນທີ **25 ມັງກອນ 2023** ເພື່ອຈະໄດ້ສັງລວມ ແລະ ນຳສົ່ງໃຫ້ ສະຖາບັນແມ່ນ້ຳຂອງ ແລະ ກົມເສດຖະກິດ, ກະຊວງການຕ່າງປະເທດ;
- ຜູ້ສະໝັກຕ້ອງມີຄວາມຮູ້ດ້ານພາສາອັງກິດໃນລະດັບດີ ທັງພາກເວົ້າ, ຂຽນ, ຟັງ ແລະ ອ່ານ;
- ຜູ້ສະໝັກຕ້ອງມີປະສົບການໃນການເຮັດວຽກທີ່ກ່ຽວຂ້ອງກັບຫົວຂໍ້ຝຶກອົບຮົມຢ່າງໜ້ອຍ 03 ປີ;
- ຜູ້ທີ່ຈະສະໝັກຕ້ອງມີອາຍຸລະຫວ່າງ 25- 40 ປີ.

ສຳລັບຄ່າໃຊ້ຈ່າຍໃນການເດີນທາງໄປ-ກັບ, ອັດຕາກິນ ແລະ ຄ່າພັກເຊົາ ໃນການເຂົ້າຮ່ວມຝຶກອົບຮົມ ແມ່ນສະຖາບັນແມ່ນ້ຳຂອງ ເປັນຜູ້ຮັບຜິດຊອບທັງໝົດ, ສ່ວນການສະໝັກແມ່ນຜ່ານລະບົບອອນລາຍຕາມ QR Code ຂອງແຕ່ລະຫົວຂໍ້ ແລະ ລາຍລະອຽດເພີ່ມເຕີມແມ່ນ ພົວພັນພະແນກຄຸ້ມຄອງ ແລະ ພັດທະນາຊັບພະຍາກອນມະນຸດ, ກົມຈັດຕັ້ງ ແລະ ພະນັກງານ: ທ. ສົມເພັດອຸດອນ ດວງມາລາ ໂທ: 021 415368, 020 52879569.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າກົມ

ບຸນທະວີ ໄຊຍະເພັດ